ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ 0387/ທຄຕລ.2026

ນະຄອນຫຼວງວຽງຈັນ, ວັນທີ 06 FEB 2026

# ໜັງສືແຈ້ງເຊີນ

**ເຖິງ:** ບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນຈຳໜ່າຍ.

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາຈັດຊື້ເຄື່ອງຈັກປັ່ນໄຟ (Generator) ຂອງສາຂາ ແລະ ໜ່ວຍບໍລິການຂອງ ທຄຕລ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງທ່ານຊາບວ່າ ທຄຕລ ຕ້ອງການຈັດຊື້ເຄື່ອງຈັກປັ່ນໄຟ (Generator) ຈຳນວນ 05 ໜ່ວຍ ເພື່ອຮັບໃຊ້ວຽກງານວິຊາສະເພາະຂອງທະນາຄານ, ດັ່ງນັ້ນ ຈຶ່ງແຈ້ງເຊີນມາຍັງທ່ານ ເພື່ອຍື່ນຊອງປະມູນລາຄາ ດັ່ງມີລາຍລະອຽດຂ້າງລຸ່ມນີ້:

| ລ/ດ | ລາຍການ | ຈຳນວນ | ໝາຍເຫດ |
|---|---|---|---|
| 1 | Generator:<br>Brand: Cummins, Wei chai, MTU<br>ສະເປັກພື້ນຖານ:<br>Generator 55KVA (44KW), 230/400 V, 50Hz<br>Gross Power: ESP - 53 / PRP - 48<br>ALTERNATOR: LEROY-SOMER / TAL-A42-G<br>Controller: DSE7320+ SE890MKII<br>ATS:<br>Model: 125 Amp<br>Rated current: 125 Amp<br>Poles: 4<br>Control Voltage: Up to 480 V AC,<br>Frequency: 50 Hz<br>Specification: 125 Amp<br>ໝາຍເຫດ: ລາຍລະອຽດຂອງເຄື່ອງຕົວຈິງ ແລະ ອຸປະກອນການຕິດຕັ້ງອື່ນໆ ບໍລິສັດລະບຸມາເພີ່ມຕື່ມ. | 3 ໜ່ວຍ | ① ໜ່ວຍບໍລິການເມືອງພຽງ, ແຂວງໄຊຍະບູລີ<br>② ໜ່ວຍບໍລິການສະໜາມໄຊ ແຂວງອັດຕະປື<br>③ ສາຂາໄຊສົມບູນ |
| 2 | Generator:<br>Brand: Cummins, Wei chai, MTU<br>ສະເປັກພື້ນຖານ:<br>Generator 33KVA (26KW), 230/400 V, 50Hz<br>Gross Power: ESP - 33 / PRP - 30<br>ALTERNATOR: LEROY-SOMER / TAL-A40-G<br>Controller: DSE7320+ SE890MKII<br>ATS:<br>Model: 63 Amp | 2 ໜ່ວຍ | ① ໜ່ວຍບໍລິການເມືອງງອຍ, ແຂວງຫຼວງພະບາງ<br>② ໜ່ວຍບໍລິການໜອງບົກ, ແຂວງຄຳມ່ວນ |

| | | | |
|---|---|---|---|
| | Rated current: 63 Amp<br>Poles: 4<br>Control Voltage: Up to 480 V AC,<br>Frequency: 50 Hz<br>Specification: 63 Amp<br>ໝາຍເຫດ: ລາຍລະອຽດຂອງເຄື່ອງຕົວຈິງ ແລະ ອຸປະກອນການຕິດຕັ້ງອື່ນໆ ບໍລິສັດລະບຸມາເພີ່ມຕື່ມ. | | |

❖ **ໜ້າວຽກ ແລະ ມາດຖານຂອງບໍລິສັດທີ່ຈະເຂົ້າຮ່ວມປະມູນລາຄາມີດັ່ງນີ້:**

- ຕ້ອງເປັນບໍລິສັດທີ່ມີປະສົບການໃນການຕິດຕັ້ງຈັກປັ່ນໄຟ ແລະ ບຳລຸງຮັກສາໃຫ້ບັນດາອົງກອນ ຫຼື ໂຄງການໃດໜຶ່ງຢ່າງໜ້ອຍ 3 ປີຂຶ້ນໄປ.
- ບໍລິສັດຕ້ອງມີໃບຢັ້ງຢືນການເປັນຕົວແທນກັບ Cummins, Wei chai, MTU ຫລື ໃບອານຸຍາດການຂາຍທີ່ກ່ຽວຂ້ອງ ຢູ່ປະເທດລາວ.
- ຕ້ອງມີເອກະສານຢັ້ງຢືນການມີພະນັກງານຊັບພອດແກ້ໄຂບັນຫາເຕັກນິກຂອງບໍລິສັດເອງ ຢ່າງໜ້ອຍ 1 ຄົນຂຶ້ນໄປ.
- ຕ້ອງມີໂປຣແກຣມທີ່ກ່ຽວຂ້ອງ ເພື່ອເຂົ້າໃນການກວດເຊັກ, ສ້ອມແປງແກ້ບັນຫາ ຫຼື ການຫາຂໍ້ມູນຂອງເຄື່ອງຈັກ.
- ສິນຄ້າຕ້ອງເປັນຂອງແທ້ທີ່ໄດ້ມາດຕະຖານຈາກໂຮງງານຜູ້ຜະລິດ ແລະ ຮັບປະກັນສິນຄ້າ 1 ປີ.
- ຕິດຕັ້ງລະບົບໃຫ້ເຄື່ອງຈັກສາມາດຕິດຕາມຜ່ານທາງເນັດເວີກຂອງ ທຄຕລ ໄດ້.
- ຮັບຜິດຊອບຄ່າຂົນສົ່ງຮອດຈຸດຕິດຕັ້ງ ແລະ ຕິດຕັ້ງສຳເລັດພ້ອມໃຊ້ງານ, ລວມສາຍໄຟ, CB ແລະ ອຸປະກອນອື່ນໆຕາມມາດຕະຖານ (ຖານ ແລະ ເຮືອນຈັກ ແມ່ນ ທຄຕລ ຈັດກຽມໃຫ້).
- ເຕີມນ້ຳມັນເຊື້ອໄຟ 100 ລິດ.
- ມີການຝຶກອົບຮົມການກວດເຊັກປະຈຳວັນ, ເຕັກນິກ ແລະ ການໃຊ້ງານພື້ນຖານ ໃຫ້ວິຊາການ ທຄຕລ ຜູ້ຮັບຜິດຊອບຂອງແຕ່ລະຈຸດ.
- ພາຍຫຼັງສິ້ນສຸດສັນຍາ ທຄຕລ ຕ້ອງສາມາດ ເຂົ້າເຖິງຂໍ້ມູນເຄື່ອງຈັກ ໄດ້ຢ່າງຄົບຖ້ວນ.
- ບໍລິສັດສາມາດເຂົ້າສຳຫຼວດສະຖານທີ່ຕິດຕັ້ງຕົວຈິງ, ສອບຖາມຂໍ້ມູນເພີ່ມຕື່ມໄດ້ຕັ້ງແຕ່ ວັນທີ 06/02/2026 ຈົນເຖິງວັນທີ 27/02/2026 ໃນໂມງລັດຖະການ.

- **ເງື່ອນໄຂຂອງຜູ້ສະໜອງທີ່ຕ້ອງການຍື່ນຊອງປະມູນລາຄາ ຕ້ອງປະກອບເອກະສານໃຫ້ຄົບຖ້ວນດັ່ງລຸ່ມນີ້:**

❖ **<u>ເອກະສານ ຊອງທີ 1</u>:**

1. ໃບທະບຽນວິສາຫະກິດດ້ານໄອທີ ຫຼື ໄຟຟ້າ
2. ໃບອະນຸຍາດດຳເນີນທຸລະກິດປີ 2024 ຫຼື 2025
3. ທຶນຈົດທະບຽນວິສາຫະກິດ 500ລ້ານກີບຂຶ້ນໄປ
4. ໃບຢັ້ງຢືນການເສຍອາກອນປີ 2023 ຫຼື 2024
5. ເອກະສານລາຍລະອຽດສະເປັກ, ການຮັບປະກັນ, ໄລຍະເວລາຈັດສົ່ງສິນຄ້າ ແລະ ຂໍ້ມູນຕ່າງໆ ຕາມ format ທີ່ຕິດຄັດມາພ້ອມນີ້.

- ເອກະສານຂ້າງເທິງແມ່ນໃຫ້ຍື່ນກ່ອນ **ວັນສຸກ, ທີ 20/02/2026 ເວລາ 15:30 ໂມງ** ທີ່ພະແນກຫ້ອງການບໍລິຫານ ແລະ ການເງິນ ຊັ້ນ 04 ຕຶກ C

❖ **<u>ເອກະສານ ຊອງທີ 2</u>: (ປິດຊອງ)**

1. ໃບສະເໜີລາຄາຕ້ອງເປັນສະກຸນເງິນກີບ ແລະ ລວມອາກອນມູນຄ່າເພີ່ມ 10%.

2. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 10% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ **(ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 04/05/2026.)** ຫຼື ແຊັກທີ່ວີຊ່າແລ້ວ/ແຊັກເງິນສົດ (ທຄຕລ ບໍ່ຮັບເງິນສົດ), ຜູ້ບໍ່ຊະນະການປະມູນພາຍຫຼັງປະກາດຜົນປະມູນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ, ສຳລັບຜູ້ຊະນະການປະມູນແມ່ນຈະສົ່ງຄືນພາຍຫຼັງເຊັນສັນຍາ.
3. **ໃນວັນພຸດ, ທີ 04/03/2026 ເວລາ 09:00 ໂມງ** ແມ່ນມື້ເປີດຊອງປະມູນ ສະນັ້ນໃຫ້ຜູ້ສະໜອງທີ່ຜ່ານການຄັດເລືອກຈາກເອກະສານຊອງທີ 1 ມາຍື່ນຊອງລາຄາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 5 ອາຄານ C.
4. ລາຄາທີ່ສະເໜີມາຕ້ອງເປັນລາຄາທີ່ສາມາດຈັດຊື້-ຕິດຕັ້ງເອງ ແລະ ບໍ່ໃຫ້ເປັນການປະມູນ ໃນນາມນາຍໜ້າ ຫຼື ຂາຍຕໍ່ໃຫ້ບໍລິສັດອື່ນ.

- **ໝາຍເຫດ:** ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ, ການຄັດເລືອກຜູ້ສະໜອງແມ່ນຈະຄັດເລືອກຈາກຫລາຍເງື່ອນໄຂ (ບໍ່ໄດ້ຄັດເລືອກຈາກລາຄາພຽງຢ່າງດຽວ).

- **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

1. ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຮັບຜິດຊອບຄ່າທຳນຽມໃນການຈົດທະບຽນສານ ແລະ ທະບຽນຊັບສິນ.
2. ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ແມ່ນຕ້ອງຮັບຜິດຊອບຄ່າເສຍຫາຍທັງໝົດໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ (ທຄຕລ ຈະບໍ່ສົ່ງເງິນຄ້ຳປະກັນການປະມູນ 10% ຄືນ).

- **ການຊຳລະຈະແບ່ງຈ່າຍເປັນ 02 ງວດ ລຸ່ມນີ້:**

  - **ງວດທີ 1:** ຊຳລະ 90% ຂອງມູນຄ່າ ພາຍໃນ 30 ວັນລັດຖະການ ພາຍຫຼັງໄດ້ຮັບເຄື່ອງ ຫຼື ເຄື່ອງມາຮອດສາງຜູ້ສະໜອງໂດຍໄດ້ຮັບການກວດກາຄວາມຖືກຕ້ອງຈາກຄະນະກຳມະການຕິດຕາມກວດກາ ແລະ ຕິດຕັ້ງສຳເລັດ ໂດຍໄດ້ຮັບການຢັ້ງຢືນຈາກສາຂາກ່ຽວຂ້ອງ.
  - **ງວດທີ 2:** ຊຳລະ 10% ຂອງມູນຄ່າ ພາຍຫຼັງຄົບກຳນົດການຄ້ຳປະກັນຄຸນະພາບສິນຄ້າ 12 ເດືອນ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອຳນວຍການ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ນ. ສາຍສະໝອນ ຈັນທະຈັກ

ສອບຖາມຂໍ້ມູນເພີ່ມຕື່ມ:

020 77467722

020 5533 4674

## (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ …………./ທຄຕລ, ລົງວັນທີ …………………..

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ | ໃບອະນຸຍາດດຳເນີນທຸລະກິດ | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (ທີ່ເຄີຍສະໜອງ ຈັກໃຫ້ພາກສ່ວນໃດແນ່) | ໃບອະນຸຍາດເປັນຕົວແທນ ຫຼື ໃບອະນຸຍາດການຂາຍ | ປະເພດ / ວັດສະດຸ / ຂະໜາດ ແລະ ເງື່ອນໄຂອື່ນໆ ຂອງສິນຄ້າທີ່ຈະປະມູນໃນຄັ້ງນີ້ | ການຮັບປະກັນສິນຄ້າ | ກຳນົດຈັດສົ່ງ + ຕິດຕັ້ງສຳເລັດ (ວັນ) | |
| 1 | ບ/ສ……… | ປີ………. | ປີ………. | ປີ………. | …. ປີ | (ໃຫ້ລະບຸ) | (ໃຫ້ລະບຸ) | | …. ປີ | ….ວັນ | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ ………………………

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:

ຊື່:

ໂທ: